ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມປູກຝັງ

0346

ເລກທີ.......................ກປ.

ນະຄອນຫຼວງວຽງຈັນ, ວັນທີ....20.02.2018....

**ບົດແນະນຳ**

**ກ່ຽວກັບການຈັດຕັ້ງປະຕິບັດຂໍ້ກຳນົດ ແລະ ເງື່ອນໄຂ ການສົ່ງອອກ ໝາກກ້ຽງຂຽວ, ໝາກພຸກ, ໝາກກ້ຽງນ້ອຍ ແລະ ໝາກມ່ວງ ຈາກ ສປປ ລາວ ໄປຍັງ ສສ ຫວຽດນາມ**

- ອີງຕາມ ກົດໝາຍວ່າດ້ວຍການປ້ອງກັນແລະການກັກກັນພືດ, ສະບັບເລກທີ 03/ສພຊ,ລົງວັນທີ 25 ພະຈິກ2016.
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກົມປູກຝັງ ສະບັບເລກທີ 3825/ກປ, ລົງວັນທີ 18 ສິງຫາ 2017.
- ອີງຕາມຂໍ້ກຳນົດເງື່ອນໄຂດ້ານສຸຂານາໄມພືດ ຈາກ ກະຊວງກະສິກຳ ແລະ ພັດທະນາຊົນນະບົດ ກົມປ້ອງກັນພືດ ລົງວັນທີ 22 November 2017.

ປັດຈຸບັນ ການຄ້າຂາຍ ພືດ ແລະ ຜະລິດຕະພັນພືດ ລະຫວ່າງ ສປປ ລາວ ກັບ ສສ ຫວຽດນາມ ໄດ້ຫັນເຂົ້າສູ່ຫຼັກການການຄ້າ ຂອງອົງການການຄ້າໂລກ ເປັນຕົ້ນແມ່ນ ການນຳໃຊ້ມາດຕະການສຸຂານາໄມພືດ ໃນການຄຸ້ມຄອງສິນຄ້າກະສິກຳລະຫວ່າງປະເທດ ຊຶ່ງ ສສ ຫວຽດນາມໄດ້ກຳນົດມາດຕະການ ກ່ຽວກັບຂໍ້ກຳນົດ ເງື່ອນໄຂດ້ານສຸຂານາໄມພືດ ສຳລັບສົ່ງອອກໝາກໄມ້ຄື ໝາກພຸກ (*Citrus maxima*), ໝາກກ້ຽງຂຽວ (*Citrus reticulata blanco*), ໝາກກ້ຽງນ້ອຍ (*Citrus sinensis*), ໝາກມ່ວງ (*Mangifera indica* L.) ທີ່ຈະສົ່ງອອກຈາກ ສປປ ລາວ ໄປຍັງ ສສ ຫວຽດນາມ ຕາມທີ່ໄດ້ກຳນົດໄວ້. ເພື່ອໃຫ້ສອດຄ່ອງ ກັບເງື່ອນໄຂ ການນຳເຂົ້າ ຂອງ ສສ ຫວຽດນາມ, ກົມປູກຝັງ ຈຶ່ງໄດ້ອອກບົດແນະນຳ ກ່ຽວກັບການຈັດຕັ້ງປະຕິບັດຂໍ້ກຳນົດ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງລຸ່ມນີ້:

1. ການຈົດທະບຽນ

- ຜູ້ສົ່ງອອກພືດທີ່ກ່າວມາຂ້າງເທິງນັ້ນ ຕ້ອງໄດ້ຈົດທະບຽນຜູ້ສົ່ງອອກ ໂດຍແມ່ນກົມປູກຝັງ ຫຼື ພາຍໃຕ້ການຊີ້ນຳຂອງກົມປູກຝັງ.
- ກ່ອນການສົ່ງອອກ ຕ້ອງໄດ້ຜ່ານການກວດກາຢັ້ງຢືນ ຈາກພະນັກງານວິຊາການຂະແໜງປູກຝັງເປັນຜູ້ຕິດຕາມ.

- ກໍລະນີມີບັນຫາໃນການສົ່ງອອກ ກົມປ້ອງກັນພືດ ແຫ່ງ ສສ ຫວຽດນາມ ມີສິດເຂົ້າມາກວດສອບປະເມີນ ລະບົບການກວດກາ ແລະ ຢັ້ງຢືນຕ່າງໆ ຊຶ່ງຄ່າໃຊ້ຈ່າຍທັງໝົດແມ່ນຄວາມຮັບຜິດຊອບຂອງບໍລິສັດສົ່ງອອກ.

2. ການກວດກາໃນການສົ່ງອອກ

- ໃນການຢັ້ງຢືນສຸຂານາໄມພືດ ຕ້ອງອອກໂດຍກົມປູກຝັງ ຫຼື ຂະແໜງປູກຝັງແຂວງ, ນະຄອນຫຼວງ ທີ່ມີສິດອອກໃບຢັ້ງຢືນສຸຂານາໄມພືດ ພາຍໃຕ້ການຄຸ້ມຄອງຂອງກົມປູກຝັງ ແລະ ຕ້ອງເປັນພາສາອັງກິດ:

  (The consignment of fresh pomelo fruits has been produced for export in accordance with the phytosanitary import requirements for importation of fresh pomelo fruits from lao to vietnam)

- ການນໍາເຂົ້າ ຜະລິດຕະພັນ ຂ້າງເທິງນັ້ນ ຕ້ອງປາດສະຈາກ ສັດຕູພືດ ທີ່ມີຊີວິດ, ດິນ ແລະ ສິ່ນສ່ວນຕ່າງໆຂອງພືດ ໂດຍສະເພາະສັດຕູພືດຕ້ອງຫ້າມຂອງ ສສ ຫວຽດນາມ.

3. ການກວດກາເວລານໍາເຂົ້າ

- ເມື່ອສິນຄ້າໄປຖືງຫວຽດນາມ ທຸກໆຊຸດສິນຄ້າ ຕ້ອງໄດ້ຖືກກວດກາໂດຍກົມປ້ອງກັນພືດ ແຫ່ງຫວຽດນາມ ຖ້າກໍລະນີພົບເຫັນສັດຕູພືດຄວບຄຸມ ຕ້ອງໄດ້ມີການບໍາບັດຕາມມາດຕະຖານ ແລະ ຫຼັກການຂອງ ສສ ຫວຽດນາມ.

4. ການກວດສອບຍ້ອນຫຼັງຄືນ

- ກົມປ້ອງກັນພືດ ຫວຽດນາມ ສາມາດເຂົ້າມາກວດສອບ ປະເມີນຄືນ ລະບົບການຢັ້ງຢືນຂອງ ສປປ ລາວ.

ສະນັ້ນ, ກົມປູກຝັງ ຈຶ່ງອອກບົດແນະນໍາສະບັບນີ້ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ຫົວໜ້າກົມປູກຝັງ

ກະຊວງກະສິກໍາ ແລະ ປ່າໄມ້ ກົມປູກຝັງ

ວິໄລສຸກ ເຄນມະວົງ

ບ່ອນສົ່ງ:

| | | | |
|---|---|---|---|
| - | ລັດຖະມົນຕີ, ຮອງ ລັດຖະມົນຕີ ທ່ານລະ | 1 ສະບັບ. | (ເພື່ອລາຍງານ) |
| - | ຂະແໜງປູກຝັງແຂວງ, ນະຄອນຫຼວງ ແລະ ດ່ານກັກກັນພືດ | 1 ສະບັບ. | (ເພື່ອຊາບ ແລະ ຈັດຕັ້ງປະຕິບັດ) |
| - | ກົມແຜນການ ແລະ ການຮ່ວມມື, ຈຸດສອບຖາມ SPS | 1 ສະບັບ. | (ເພື່ອຊາບ) |
| - | ສະພາອຸດສາຫະກໍາ ແລະ ການຄ້າລາວ | 1 ສະບັບ. | (ເພື່ອຊາບ ແລະ ຊ່ວຍເຜີຍແຜ່) |
| - | ເກັບມ້ຽນ | 1 ສະບັບ | |

ສອບຖາມຂໍ້ມູນເພີ່ມ: ກະລຸນນາຕິດຕໍ່ ພະແນກກັກກັນພືດ ໂທ 452649